multicultural communication

REVIEWED September2004
NSWMulticulturalHealthCommunicationService

Laotian
November 2001
[BHC-5975]

## ທ່ານຈຳເປັນຕ້ອງໃຊ້ບໍລິການພແນກສຸກເສີນຂອງໂຮງໝໍບໍ - ຫຼືວ່າທ່ານໝໍໃນເຂດທ້ອງຖິ່ນກໍສາມາດ ຊ່ວຍໄດ້?

# Do you need a hospital emergency department – or can your local doctor help?

ເປັນສິ່ງສຳຄັນທີ່ເຮົາຕ້ອງຮູ້ວ່າໜ້າທີ່ຂອງພແນກສຸກເສີນຂອງໂຮງໝໍນັ້ນແມ່ນຫຍັງແທ້. ພແນກນີ້ແມ່ນຕັ້ງຂຶ້ນມາ ເພື່ອປິ່ນປົວກໍຣະນີສຸກເສີນທີ່ເຈັບໜັກ ເຊັ່ນອຸບັດຕິເຫດຣົດຕຳ ຫຼື ໂຣກຫົວໃຈວາຍ ແລະ ຄົນທີ່ເຈັບ ບໍ່ຮ້າຍແຮງເຖິງຂັ້ນນັ້ນ. ການທີ່ທ່ານຮູ້ຈັກວ່າພແນກສຸກເສີນຂອງໂຮງໝໍເຮັດວຽກແບບໃດແລະ ຮູ້ຈັກໃຊ້ບໍລິການຈາກບ່ອນອື່ນແທນທີ່ຈະໃຊ້ພແນກສຸກເສີນສາມາດຫຼຸດເວລາລໍຖ້າລົງ ແລະ ຈະຊ່ວຍໃຫ້ທ່ານ ໄດ້ຮັບການປິ່ນປົວໄວຂຶ້ນ. ທ່ານຈະຕ້ອງໄດ້ລໍຖ້າດົນປານໃດຢູ່ພແນກສຸກເສີນນັ້ນ ຂຶ້ນກັບວ່າບັນຫາຂອງ ທ່ານຮີບດ່ວນປານໃດ - ຜູ້ທີ່ມີ ບັນຫາຮ້າຍແຮງຫຼາຍກວ່າກໍຈະໄດ້ຮັບການປິ່ນປົວໄວ ກ່ອນກໍຣະນີທີ່ ເຈັບ ນ້ອຍກວ່າ.

## ຂ້ອຍຈະໄປຂໍຄຳແນະນຳຫຼືປິ່ນປົວໄດ້ຢູ່ໃສອີກແດ່?

ຕາມປົກກະຕິ ທ່ານໝໍປິ່ນປົວທົ່ວໄປ (GP) ເປັນຄົນທຳອິດທີ່ທ່ານຄວນໄປຫາເມື່ອທ່ານມີບັນຫາເຣື່ອງສຸຂພາບ. ທ່ານໝໍ GP ນີ້ເຮັດວຽກຢູ່ຕາມສູນສຸຂພາບຊຶ່ງເປີດຮອດຄ່ຳຫຼືອາດເປີດຕລອດ 24 ຊົ່ວໂມງ. ຖ້າທ່ານໄປຫາທ່ານໝໍ GP ແທນທີ່ຈະໄປພແນກສຸກເສີນຂອງໂຮງໝໍ ທ່ານຈະໄດ້ຮັບການປິ່ນປົວໃນລະຍະເວລາສັ້ນກວ່າ, ແລະທ່ານຍັງຈະຊ່ວຍລົດຜ່ອນພາຣະໃຫ້ທາງພແນກສຸກເສີນຂອງໂຮງໝໍອີກດ້ວຍ. ນອກຈາກນີ້ທ້ອງຖິ່ນຫຼາຍເຂດກໍຍັງມີສູນສຸຂພາບທີ່ມີພະນັກງານຊຶ່ງຊ່ຽວຊານດ້ານຕ່າງໆ ຊຶ່ງສາມາດໃຫ້ບໍຣິການຫຼາຍໆຢ່າງ ໂດຍບໍ່ຄິດຄ່າ. ຖ້າທ່ານຕ້ອງການຣາຍລະອຽດເພີ້ມຕື່ມ, ກະຣຸນາຕິດຕໍ່ຫາ ສູນສຸຂພາບຊຸມຊົນ Community Health Centre ( ໃຫ້ເບິ່ງພາຍໃຕ້ ໂຕ C ໃນສມຸດໂທຣະສັບ).

## ເມື່ອມາຮອດພແນກສຸກເສີນແລ້ວຈະເກີດຫຍັງຂຶ້ນ?

ທ່ານຈະໄດ້ພົບພະນັກງານຕ້ອນຮັບທີ່ໜ້າໂຕະ ແລະ ພົບກັບພຍາບານ "ກວດສະພາບ" (triage nurse). ທ່ານມີສິດຂໍເອົາຜູ້ແປພາສາໄດ້, ແລະຖ້າທ່ານຕ້ອງການຜູ້ແປພາສາ, ຈົ່ງບອກໃຫ້ພະນັກງານຮູ້ທັນທີ. ພະນັກງານຕ້ອນຮັບຈະຖາມເອົາສິ່ງເຫຼົ່ານີ້ຈາກທ່ານ:

- ບັດກວດສຸຂພາບເມດີແຄຣ໌ (ຫຼືບັດ Health Care Card ຖ້າທ່ານມີ)
- ຣາຍລະອຽດກ່ຽວກັບຕົວທ່ານ ເຊັ່ນ ຊື່, ທີ່ຢູ່ ແລະ ຊື່ຂອງທ່ານໝໍປະຈຳຕົວຂອງທ່ານ. ຣາຍລະອຽດເຫຼົ່ານີ້ຈະຊ່ວຍໃຫ້ທາງໂຮງໝໍໄດ້ໄປຂໍເອົາປະວັດກ່ຽວກັບສຸຂພາບຂອງທ່ານ

ພຍາບານກວດສະພາບ ແມ່ນຜູ້ຊ່ຽວຊານດ້ານສຸຂພາບທີ່ໄດ້ຮັບການຝຶກຝົນມາເປັນພິເສດ ໜ້າທີ່ຂອງເຂົາເຈົ້າແມ່ນກວດເບິ່ງອາການເຈັບວ່າຕ້ອງການປິ່ນປົວຮີບດ່ວນປານໃດ. ເຊັ່ນດຽວກັບທ່ານໝໍ, ພຍາບານໃນພແນກສຸກເສີນ ແມ່ນຜູ້ຊ່ຽວຊານດ້ານສຸຂພາບທີ່ໄດ້ຮັບການຝຶກຝົນມາເພື່ອປິ່ນປົວຄົນເຈັບທີ່ພແນກສຸກເສີນໂດຍສະເພາະ. ໃນບາງກໍຣະນີ ພຍາບານກໍຈະເລີ້ມທຳການຮັກສາຄົນເຈັບກ່ອນເຂົາເຈົ້າຈະເຂົ້າພົບທ່ານໝໍ.

## ເມື່ອຂ້ອຍມາຮອດພະແນກສຸກເສີນແລ້ວຂ້ອຍຈະຕ້ອງຖ້າດົນປານໃດ?

ທ່ານບໍ່ສາມາດເຮັດນັດພົບກັບໝໍທີ່ພະແນກສຸກເສີນໄດ້. ຖ້າວ່າໃຜຜູ້ນຶ່ງໄດ້ເຂົ້າພົບທ່ານໝໍກ່ອນຜູ້ທີ່ມາຖ້າດົນກວ່າ, ກໍໝາຍຄວາມວ່າອາການຂອງລາວໜັກກວ່ານັ້ນເອງ. ເຖິງແມ່ນວ່າທ່ານຖືກສົ່ງມາໂຮງໝໍ ໂດຍຣົດພຍາບານກໍບໍ່ໄດ້ໝາຍຄວາມວ່າທ່ານຈະໄດ້ພົບໝໍທັນທີທັນໃດ - ຖ້າຫາກວ່າມີກໍຣະນີອື່ນໆທີ່ຮີບດ່ວນກວ່າ. ເຫດຜົນຢ່າງອື່ນທີ່ເຮັດໃຫ້ມີການລໍຖ້າຍາວນານກໍມີເຊັ່ນວ່າ:

- ການທີ່ຈະໄດ້ຣາຍລະອຽດຕ່າງໆເພື່ອລົງມະຕິອາການຂອງຄົນເຈັບໄດ້ຢ່າງຄົບຖ້ວນນັ້ນອາດຕ້ອງໃຊ້ເວລານຶ່ງເຖິງສອງຊົ່ວໂມງ. ຍົກຕົວຢ່າງ ທ່ານອາດຕ້ອງໄດ້ເຮັດເອັກສ໌ເຣຍ໌ ຫຼື ຕ້ອງໄດ້ກວດຢ່າງອື່ນ ອີກກ່ຽວກັບອາການຂອງທ່ານ.
- ຖ້າທ່ານຕ້ອງໄດ້ນອນໂຮງໝໍ ອາດຕ້ອງໄດ້ໃຊ້ເວລາຫຼາຍຊົ່ວໂມງເພື່ອຈັດຫາຕຽງໃຫ້ (ແຕ່ວ່າທ່ານຈະໄດ້ຖືກດູແລເປັນຢ່າງດີໃນລະຫວ່າງລໍຖ້ານີ້).

## ຂ້ອຍຄວນເຮັດຫຍັງແດ່ໃນລະຫວ່າງລໍຖ້າ?

- ຖ້າວ່າທ່ານເປັນຄົນເຈັບ, ພະນັກງານຂອງໂຮງໝໍອາດຈະບອກໃຫ້ທ່ານບໍ່ໃຫ້ກິນຫຼືດື່ມຫຍັງຈົນກວ່າທ່ານໄດ້ພົບທ່ານໝໍ. ຖ້າທ່ານຮູ້ສຶກບໍ່ສະບາຍຫຼືມີອາການປ່ຽນແປງ (ຫຼືຖ້າທ່ານຮູ້ສຶກດີຂຶ້ນແລະຢາກເມືອ), ຈົ່ງບອກໃຫ້ພຍາບານກວດສະພາບ ຮູ້.
- ໃຫ້ເຮັດຕາມພະນັກງານບອກໃນລະຫວ່າງມາຢ້ຽມ. ຖ້າທ່ານຊ່ວຍເຫຼືອພະນັກງານ, ເຂົາເຈົ້າກໍຈະສາມາດໃຫ້ການດູແລທ່ານໄດ້ເຕັມຂີດ.

ກະຣຸນາຈຳໄວ້ດ້ວຍວ່າ ພະແນກສຸກເສີນຂອງໂຮງໝໍເປັນບ່ອນທີ່ມີຄວາມກົດດັນຫຼາຍ, ແລະ ພະນັກງານກໍເຮັດວຽກພາຍໃຕ້ຄວາມກົດດັນເພື່ອຊ່ວຍກໍຣະນີທີ່ຮີບດ່ວນທີ່ສຸດກ່ອນ. ເຖິງວ່າ ທ່ານຈະກັງວົນ ແລະ ຫງຸດຫງິດຍ້ອນການລ່າຊ້າ ຫຼາຍປານໃດກໍຕາມ, ການໃຊ້ນິສັຍຂົ່ມຂູ່ ຫຼື ໃຊ້ຄວາມຮຸນແຮງກໍ່ພະນັກງານ ຈະບໍ່ຖືກຍອມຮັບ. ການໃຊ້ຄວາມໂມໂຫໂຫໂສ ແລະ ສ້າງຄວາມວຸ້ນວາຍ ຈາກຄົນເຈັບແລະພີ່ນ້ອງ ຍິ່ງຈະເຮັດໃຫ້ມີການລ່າຊ້າຫຼາຍຂຶ້ນ.

## ຈະເກີດຫຍັງຂຶ້ນເມື່ອຂ້ອຍອອກຈາກພະແນກສຸກເສີນແລ້ວ?

ທາງໂຮງໝໍຈະເອົາແຜນການຮັກສາຕໍ່ໃຫ້ຄົນເຈັບ, ແລະ ຈະບອກວ່າຕ້ອງມາພົບທ່ານໝໍອີກເມື່ອໃດ. ຖ້າທ່ານຢາກໄດ້ໜັງສື ຫຼື ຈົດໝາຍ ຢັ້ງຢືນ ກ່ຽວກັບ ອາການຂອງຄົນເຈັບ ແລະ ການປິ່ນປົວ, ກະຣຸນາຖາມເອົາຈາກໂຮງໝໍໄດ້ ກ່ອນເມືອບ້ານ.

ຖ້າທ່ານ ຕ້ອງການ ຄວາມຊ່ວຍເຫຼືອເຣື່ອງການ ໂທຣະສັບເປັນພາສາອັງກິດ, ກະຣຸນາໂທຣະສັບຫາ ພະແນກແປ ເອກກະສານ ແລະ ແປ ພາສາ (TIS) ເບີໂທຣ 131 450.

ທ່ານສາມາດຫາເບິ່ງຂໍ້ມູນເຣື່ອງສຸຂພາບເປັນພາສາລາວຕື່ມໄດ້ທາງອິນເຕີແນັດ ທີ່ ເວັບ ໄຊຕ໌ ຂອງ Multicultural Communication ທີ່ <http://mhcs.health.nsw.gov.au>

ເລກໂທຣະສັບເຫຼົ່ານີ້ ແມ່ນຖືກຕ້ອງໃນເວລາທີ່ພິມເອກກະສານນີ້ ແຕ່ວ່າອາດມີການປ່ຽນແປງ. ທ່ານອາດຈະຕ້ອງໄດ້ກວດເບິ່ງເລກໂທຣ ໃນສມຸດໂທຣະສັບເບິ່ງໃໝ່.